ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ກະຊວງການເງິນ

ເລກທີ 529 /ກງ

ນະຄອນຫຼວງວຽງຈັນ, ວັນທີ 26 FEB 2016

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ ກະຊວງການເງິນ

## ວ່າດ້ວຍ ການນຳໃຊ້ມາດຕະຖານສາກົນດ້ານການບັນຊີແຫ່ງລັດຕາມພື້ນຖານເງິນສົດ

- ອີງຕາມ ກົດໝາຍວ່າດ້ວຍ ການບັນຊີ ສະບັບເລກທີ47/ສພຊ, ລົງວັນທີ 26ທັນວາ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ;
- ອີງຕາມ ໃບສະເໜີ ຂອງກົມບັນຊີສະບັບ ເລກທີ 481/ກງ.ກບຊ, ລົງວັນທີ 7 ທັນວາ 2015.

## ລັດຖະມົນຕີວ່າການກະຊວງການເງິນ ຕົກລົງ:

ມາດຕາ 1 ເຫັນດີນຳໃຊ້ ມາດຕະຖານສາກົນດ້ານການບັນຊີແຫ່ງລັດ ຕາມພື້ນຖານເງິນສົດ (Cash-Basis Inter-national Public Sector Accounting Standards) ທີ່ສະພາມາດຕະຖານສາກົນດ້ານການບັນຊີແຫ່ງລັດ ໄດ້ຮັບຮອງ ແລະ ປະກາດໃຊ້ເປັນແຕ່ລະໄລຍະເພື່ອເປັນບ່ອນອີງໃຫ້ຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ກອງທຶນຂອງລັດ ໃນການຈັດຕັ້ງປະຕິບັດວຽກງານບັນຊີແຫ່ງລັດ ແລະ ການສ້າງເອກະສານລາຍງານການເງິນ ຂອງຫົວໜ່ວຍຖືບັນຊີແຫ່ງລັດ.

ມາດຕາ 2 ມອບໃຫ້ ກົມບັນຊີ ກະຊວງການເງິນ ເປັນເຈົ້າການໃນການເຜີຍແຜ່, ແນະນຳ ການນຳໃຊ້ມາດຕະຖານໃນຂອບເຂດທົ່ວປະເທດ.

ມາດຕາ 3 ມອບໃຫ້ ກົມບັນຊີ, ກົມງົບປະມານແຫ່ງລັດ, ຄັງເງິນແຫ່ງຊາດ ແລະ ກົມວິຊາການທີ່ກ່ຽວຂ້ອງ ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ປະເມີນຜົນການຈັດຕັ້ງປະຕິບັດມາດຕະຖານເປັນແຕ່ລະໄລຍະ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ຈັດຕັ້ງປະຕິບັດ ນັບແຕ່ສົກປີງົບປະມານ 2016-2017 ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ

ດຣ ລຽນ ທິແກ້ວ